ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ ເລກທີ 11 /ສພຊ

# ມະຕິຕົກລົງ
# ຂອງ
# ສະພາແຫ່ງຊາດ ແຫ່ງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ
# ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະໜ້າທີ່ ຂອງສະພາແຫ່ງຊາດ.

ອີງຕາມການສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ່ 31/ຫສນຍ. ລຊ , ລົງວັນທີ 04/06/2004.

ພາຍຫລັງທີ່ກອງປະຊຸມສະໄໝ ສາມັນເທື່ອທີ່ 6 ຂອງສະພາແຫ່ງຊາດຊຸດທີ່ V ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະເລິກເຊິ່ງກ່ຽວກັບເນື້ອໃນກົດໝາຍວ່າດ້ວຍ ການສົ່ງເສີມ ການລົງທຶນພາຍໃນ ຕ່າງປະເທດ ສະບັບປັບປຸງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 22 ຕຸລາ 2004.

## ກອງປະຊຸມໄດ້ຕົກລົງ:

**ມາດຕາ 1:** ຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມ ການລົງທຶນພ ສະບັບປັບປຸງ ດ້ວຍຄະແນນສຽງ ເປັນເອກະສັນ.

**ມາດຕາ 2:** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ນະຄອນຫລວງວຽງຈັນ, ວັນທີ 22 ຕຸລາ 2004

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 73 /ສປປ

# ລັດຖະດຳລັດ
# ຂອງປະທານປະເທດ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ວ່າດ້ວຍການສົ່ງເສີມການລົງທຶນ ຕ່າງປະເທດ ສະບັບປັບປຸງ

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໝວດທີ V ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະກົດໝາຍທີ່ ສະພາແຫ່ງຊາດ ໄດ້ຕົກລົງ ຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 11 /ສພຊ, ລົງວັນທີ 22 ຕຸລາ 2004 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ສະບັບປັບປຸງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 27/ ຄປຈ, ລົງວັນທີ 10 ພະຈິກ 2004

**ປະທານປະເທດ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດ:**

**ມາດຕາ 1:** ປະກາດໃຊ້ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນຕ່າງປະເທດ ສະບັບ ປັບ ປຸງ.

**ມາດຕາ 2:** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ນະຄອນຫລວງວຽງຈັນ, ວັນທີ 15 ພະຈິກ 2004

ປະທານປະເທດແຫ່ງ ສປປລາວ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ສະພາແຫ່ງຊາດ ເລກທີ 11 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 22 ຕຸລາ 2004

# ກົດໝາຍ
# ວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການສົ່ງເສີມ ການລົງທຶນຕ່າງປະເທດ ກຳນົດຫລັກການ, ລະບຽບການ ແລະມາດຕະການ ກ່ຽວກັບການສົ່ງເສີມ, ປົກປ້ອງ ແລະ ຄຸ້ມຄອງການລົງທຶນຕ່າງປະເທດ ຢູ່ ສປປ ລາວ ແນໃສ່ເສີມຂະຫຍາຍການພົວພັນ, ການຮ່ວມມືທາງດ້ານເສດຖະກິດກັບຕ່າງປະເທດ, ການນຳໃຊ້ແຫຼ່ງທຶນ, ສະຕິປັນຍາ ເພື່ອຂະຫຍາຍກຳລັງການຜະລິດຢ່າງມີປະສິດທິຜົນ, ຮັບໃຊ້ການຫັນເປັນອຸດສາຫະກຳ ແລະການຫັນເປັນທັນສະໄໝເທື່ອລະກ້າວ, ປະກອບສ່ວນເຂົ້າໃນການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະສ້າງສາພັດທະນາປະເທດຊາດ ໃຫ້ຮັ່ງມີເຂັ້ມແຂງ.

**ມາດຕາ 2. ນິຍາມຄຳສັບ**

**ການລົງທຶນຕ່າງປະເທດ** ໝາຍເຖິງການນຳເອົາທຶນຮອນ ຊຶ່ງປະກອບດ້ວຍຊັບສິນ, ເຕັກໂນໂລຢີ ແລະບົດຮຽນ ເຂົ້າມາ ສປປ ລາວ ໂດຍຜູ້ລົງທຶນຕ່າງປະເທດ ເພື່ອດຳເນີນທຸລະກິດ.

**ຜູ້ລົງທຶນຕ່າງປະເທດ** ໝາຍເຖິງບຸກຄົນ ຫລືນິຕິບຸກຄົນຕ່າງປະເທດທີ່ມາລົງທຶນຢູ່ ສປປລາວ.

**ຜູ້ລົງທຶນພາຍໃນ** ໝາຍເຖິງຜູ້ຮ່ວມທຶນ ຫລື ຜູ້ຮ່ວມມືທຸລະກິດກັບຕ່າງປະເທດໂດຍບຸກຄົນ ຫລືນິຕິບຸກຄົນຂອງຄົນລາວ ທີ່ຢູ່ ສປປລາວ ຊຶ່ງປະກອບມີບຸກຄົນ ຫລືການຈັດຕັ້ງຂອງຄົນລາວ, ຊາວຕ່າງດ້າວ ແລະຄົນບໍ່ມີສັນຊາດ.

**ຊັບສິນ** ໝາຍເຖິງ ເງິນຕາ, ຊັບສິ່ງຂອງ ແລະຊັບສິນທາງປັນຍາ.

**ວິສາຫະກິດການລົງທຶນຕ່າງປະເທດ** ໝາຍເຖິງວິສາຫະກິດລົງທຶນຕ່າງປະເທດຮ້ອຍສ່ວນຮ້ອຍ, ວິສາຫະກິດປະສົມ ແລະທຸລະກິດຮ່ວມຕາມສັນຍາ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ ສປປ ລາວ.

**ມາດຕາ 3. ການສົ່ງເສີມການລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດສາມາດລົງທຶນໃສ່ການຜະລິດ, ທຸລະກິດໄດ້ໃນທຸກຂະແໜງການ ແລະທຸກເຂດການລົງທຶນຂອງ ສປປລາວ ເວັ້ນເສຍແຕ່ໃນບັນດາກິດຈະການ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມໃນປັດຈຸບັນ ຫລື ຍາວນານ, ຕໍ່ສຸຂະພາບ ຫລື ວັດທະນະທຳອັນດີງາມຂອງຊາດ.

ລັດສົ່ງເສີມໃຫ້ຜູ້ລົງທຶນຕ່າງປະເທດ ລົງທຶນໃສ່ກິດຈະການຂອງຂະແໜງການ, ເຂດການລົງທຶນ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 16 ແລະ 17 ຂອງກົດໝາຍສະບັບນີ້ ດ້ວຍການວາງນະໂຍບາຍດ້ານພາສີ, ອາກອນ, ລະບຽບການ, ມາດຕະການ, ການສະໜອງຂໍ້ມູນຂ່າວສານ, ການບໍລິການ ແລະຄວາມສະດວກອື່ນໆ ແກ່ນັກລົງທຶນຕ່າງປະເທດ.

**ມາດຕາ 4. ການປົກປ້ອງການລົງທຶນຕ່າງປະເທດ**

ຊັບສົມບັດ ແລະ ການລົງທຶນຂອງຜູ້ລົງທຶນຕ່າງປະເທດ ຢູ່ ສປປ ລາວ ຈະຖືກປົກປ້ອງຢ່າງເຕັມສ່ວນດ້ວຍລະບຽບກົດໝາຍ ຂອງ ສປປ ລາວ ໂດຍຈະບໍ່ຖືກ ເກັບເກນ, ບໍ່ຖືກຍຶດ ລວມທັງຈະບໍ່ຖືກໂອນເປັນຂອງລັດ, ເວັ້ນເສຍແຕ່ຫາກມີຄວາມຈຳເປັນນຳໃຊ້ເພື່ອສາທາລະນະປະໂຫຍດ ຊຶ່ງຜູ້ລົງທຶນຕ່າງປະເທດ ຈະໄດ້ຮັບຄ່າທົດແທນຄືນ ຕາມລະບຽບກົດໝາຍ.

## ໝວດທີ II
## ຮູບການລົງທຶນຕ່າງປະເທດ

**ມາດຕາ 5. ຮູບການລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ສາມາດລົງທຶນຢູ່ ສປປ ລາວ ດ້ວຍຮູບການດັ່ງຕໍ່ໄປນີ້:

1. ທຸລະກິດຮ່ວມຕາມສັນຍາ;
2. ວິສາຫະກິດປະສົມລະຫວ່າງຜູ້ລົງທຶນຕ່າງປະເທດກັບຜູ້ລົງທຶນພາຍໃນປະເທດ;
3. ວິສາຫະກິດລົງທຶນຕ່າງປະເທດ ຮ້ອຍສ່ວນຮ້ອຍ (100%).

**ມາດຕາ 6. ທຸລະກິດຮ່ວມຕາມສັນຍາ**

ທຸລະກິດຮ່ວມຕາມສັນຍາ ແມ່ນການຮ່ວມທຸລະກິດນຳກັນ ລະຫວ່າງນິຕິບຸກຄົນລົງທຶນພາຍໃນ ກັບຝ່າຍຕ່າງປະເທດ ໂດຍບໍ່ໄດ້ສ້າງຕັ້ງນິຕິບຸກຄົນໃໝ່ຂຶ້ນຢູ່ ສປປ ລາວ.

ສຳລັບວັດຖຸປະສົງ, ຮູບແບບການຮ່ວມມື, ໄລຍະເວລາຂອງການດຳເນີນທຸລະກິດ, ສິດ, ພັນທະ, ຄວາມຮັບຜິດຊອບ ແລະຜົນປະໂຫຍດຂອງແຕ່ລະຝ່າຍແມ່ນໃຫ້ກຳນົດໄວ້ໃນສັນຍາ.

**ມາດຕາ 7. ວິສາຫະກິດປະສົມ**

ວິສາຫະກິດປະສົມ ແມ່ນວິສາຫະກິດທີ່ສ້າງຕັ້ງ ແລະຂຶ້ນທະບຽນຕາມລະບຽບກົດໝາຍຂອງ ສປປ ລາວ ຊຶ່ງມີການດຳເນີນທຸລະກິດ ແລະເປັນກຳມະສິດຮ່ວມລະຫວ່າງຜູ້ລົງທຶນຕ່າງປະເທດ ແລະຜູ້ລົງທຶນພາຍໃນ. ການຈັດຕັ້ງ, ການຄຸ້ມຄອງ, ການເຄື່ອນໄຫວ ແລະການພົວພັນລະຫວ່າງຜູ້ຮ່ວມລົງທຶນໃນວິສາຫະກິດປະສົມ ຖືກກຳນົດດ້ວຍສັນຍາລະຫວ່າງສອງຝ່າຍ ແລະກົດລະບຽບຂອງວິສາຫະກິດປະສົມນັ້ນ.

ສຳລັບຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນວິສາຫະກິດປະສົມນີ້ ຕ້ອງປະກອບທຶນຢ່າງໜ້ອຍບໍ່ໃຫ້ຫລຸດ ສາມສິບສ່ວນຮ້ອຍ (30%) ຂອງທຶນຈົດທະບຽນ. ການປະກອບທຶນເປັນເງິນຕາຕ່າງປະເທດ ຕ້ອງຄິດໄລ່ເປັນເງິນກີບ ຕາມອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ ໃນມື້ປະກອບທຶນ.

**ມາດຕາ 8. ວິສາຫະກິດລົງທຶນຕ່າງປະເທດ ຮ້ອຍສ່ວນຮ້ອຍ (100%)**

ວິສາຫະກິດລົງທຶນຕ່າງປະເທດ ຮ້ອຍສ່ວນຮ້ອຍ (100%) ແມ່ນວິສາຫະກິດຂອງຕ່າງປະເທດທີ່ລົງທຶນແຕ່ຝ່າຍດຽວ ຊຶ່ງສ້າງຕັ້ງຢູ່ ສປປລາວ. ການສ້າງຕັ້ງວິສາຫະກິດດັ່ງກ່າວ ອາດຈະສ້າງເປັນນິຕິບຸກຄົນໃໝ່ ຫລື ເປັນສາຂາຂອງວິສາຫະກິດຕ່າງປະເທດ.

**ມາດຕາ 9. ທຶນຈົດທະບຽນ**

ທຶນຈົດທະບຽນຂອງວິສາຫະກິດລົງທຶນຕ່າງປະເທດ ແມ່ນບໍ່ໃຫ້ຫລຸດ ສາມສິບສ່ວນຮ້ອຍ (30%) ຂອງທຶນທັງໝົດ. ໃນຕະຫລອດໄລຍະດຳເນີນທຸລະກິດລົງທຶນຕ່າງປະເທດນັ້ນ ຊັບສິນຂອງວິສາຫະກິດ ແມ່ນບໍ່ໃຫ້ຫລຸດທຶນຈົດທະບຽນ.

**ມາດຕາ 10. ຫ້ອງການຜູ້ຕາງໜ້າ**

ນິຕິບຸກຄົນຕ່າງປະເທດ ທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍຂອງປະເທດອື່ນ ສາມາດສ້າງຕັ້ງຫ້ອງການຜູ້ຕາງຫນ້າຂອງຕົນ ຢູ່ ສປປ ລາວ ເພື່ອເກັບກຳຂໍ້ມູນ, ສຶກສາຄວາມອາດສາມາດເປັນໄປໄດ້ໃນການລົງທຶນ ແລະປະສານງານດ້ານເອກະສານຕ່າງໆ ເພື່ອສະເໜີລົງທຶນ.

ສຳລັບຫ້ອງການຜູ້ຕາງໜ້າ ຫລືຕົວແທນທີ່ມີເປົ້າໝາຍທາງການຄ້າ ແມ່ນບໍ່ນອນຢູ່ໃນການຄຸ້ມຄອງຂອງກົດໝາຍສະບັບນີ້.

**ມາດຕາ 11. ອາຍຸການອະນຸຍາດລົງທຶນ**

ອາຍຸຂອງວິສາຫະກິດລົງທຶນຕ່າງປະເທດແມ່ນອີງຕາມລັກສະນະ, ຂະໜາດ ແລະເງື່ອນໄຂຂອງກິດຈະການ ຫລືໂຄງການບໍ່ໃຫ້ເກີນ ຫ້າສິບ ປີ ແລະສາມາດຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ແຕ່ອາຍຸຂອງວິສາຫະກິດລົງທຶນຕ່າງປະເທດສູງສຸດ ບໍ່ໃຫ້ເກີນ ເຈັດສິບຫ້າປີ.

## ໝວດທີ III
## ສິດ, ຜົນປະໂຫຍດ ແລະ ພັນທະຂອງຜູ້ລົງທຶນຕ່າງປະເທດ

**ມາດຕາ 12. ສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ມີສິດ ແລະ ຜົນປະໂຫຍດດັ່ງຕໍ່ໄປນີ້:

1. ໄດ້ຮັບຄວາມສະດວກຈາກລັດ ໃນການສ້າງຕັ້ງ ແລະການເຄື່ອນໄຫວການຜະລິດ, ທຸລະກິດ ຕາມລະບຽບກົດໝາຍ;
2. ໄດ້ຮັບການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການດຳເນີນທຸລະກິດຂອງຕົນ;
3. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ;
4. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫລື ສຳປະທານທີ່ດິນ ເຊັ່ນ: ນຳໃຊ້, ຂາຍ ຫລື ເອົາຊັບສິ່ງຂອງທີ່ຕິດພັນກັບທີ່ດິນເຊົ່າ ຫລື ສຳປະທານ ເປັນລັກຊັບຄ້ຳປະກັນນຳບຸກຄົນອື່ນ ຫລື ນຳສະຖາບັນການເງິນ ຫລືຮ່ວມທຶນ; ໃຫ້ເຊົ່າຕໍ່ສິດນຳໃຊ້ທີ່ດິນ; ໃຫ້ສືບທອດສັນຍາເຊົ່າ ຫລື ສຳປະທານທີ່ດິນຕາມອາຍຸຂອງສັນຍາ; ໃຊ້ສັນຍາເຊົ່າ ຫລື ສຳປະທານທີ່ດິນ ເພື່ອຮ່ວມທຶນ ຫລື ຄ້ຳປະກັນກັບບຸກຄົນອື່ນ. ສ່ວນລາຍລະອຽດກ່ຽວກັບສິດ, ຜົນປະໂຫຍດ ແລະພັນທະຂອງຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບຈາກການເຊົ່າ ຫລື ສຳປະທານທີ່ດິນນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ ແລະກົດໝາຍອື່ນໆທີ່ກ່ຽວຂ້ອງ;
5. ນຳໃຊ້ແຮງງານຕ່າງປະເທດ ຖ້າຫາກມີຄວາມຈຳເປັນ ແຕ່ບໍ່ໃຫ້ເກີນ ສິບສ່ວນຮ້ອຍ (10%) ຂອງແຮງງານ ຂອງວິສາຫະກິດ;
6. ຜູ້ລົງທຶນຕ່າງປະເທດ ແລະສະມາຊິກຄອບຄົວ ລວມທັງນັກວິຊາການ, ພະນັກງານທີ່ເປັນຄົນຕ່າງປະເທດຂອງວິສາຫະກິດລົງທຶນ ຈະໄດ້ຮັບຄວາມສະດວກໃນການຂໍວີຊາເຂົ້າ-ອອກ ຫຼາຍເທື່ອ ແລະ ອາໃສຢູ່ດິນແດນຂອງ ສປປລາວ ໃນໄລຍະຍາວ

ຕາມການຕົກລົງຂອງລັດຖະບານ; ມີເງື່ອນໄຂຂໍເອົາສັນຊາດລາວໄດ້ຕາມກົດໝາຍວ່າດ້ວຍສັນຊາດລາວ;

7. ໄດ້ຮັບການປົກປ້ອງຊັບສິນທາງປັນຍາ ທີ່ຈົດທະບຽນນຳຂະແໜງການທີ່ກ່ຽວຂ້ອງຂອງ ສປປ ລາວ;
8. ສົ່ງຜົນກຳໄລ, ທຶນຮອນ ແລະ ລາຍຮັບອື່ນໆ ພາຍຫລັງທີ່ໄດ້ປະຕິບັດພັນທະທາງດ້ານພາສີ, ອາກອນ ແລະ ຄ່າທຳນຽມອື່ນໆຄົບຖ້ວນ ຕາມລະບຽບກົດໝາຍແລ້ວ ຄືນປະເທດຂອງຕົນ ຫລື ປະເທດທີ່ສາມ ໂດຍຜ່ານທະນາຄານທີ່ຕັ້ງຢູ່ ສປປ ລາວ;
9. ເປີດບັນຊີເປັນເງິນກີບ ແລະ ເງິນຕາຕ່າງປະເທດ ຢູ່ທະນາຄານ ທີ່ຕັ້ງຢູ່ ສປປ ລາວ;
10. ຮ້ອງຂໍຄວາມເປັນທຳ ຫລື ຮ້ອງຟ້ອງ ຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນຖືກເສັຍປະໂຫຍດໃນການດຳເນີນທຸລະກິດ;
11. ໄດ້ຮັບສິດ ແລະຜົນປະໂຫຍດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 13. ພັນທະຂອງຜູ້ລົງທຶນຕ່າງປະເທດ**

ພັນທະຂອງຜູ້ລົງທຶນຕ່າງປະເທດ ມີດັ່ງນີ້:

1. ດຳເນີນການຜະລິດ, ທຸລະກິດຕາມໃບອະນຸຍາດ, ຂັ້ນຕອນຂອງບົດວິພາກເສດຖະກິດ-ເຕັກນິກ, ສັນຍາ ແລະຕາມລະບຽບກົດໝາຍ;
2. ຖືບັນຊີຕາມກົດໝາຍວ່າດ້ວຍບັນຊີວິສາຫະກິດ ຂອງ ສປປ ລາວ ໃນກໍລະນີທີ່ຈຳເປັນກໍສາມາດນຳໃຊ້ລະບົບບັນຊີອື່ນທີ່ສາກົນຮັບຮູ້ໄດ້ແຕ່ຕ້ອງໄດ້ຮັບຄວາມເຫັນດີຈາກກະຊວງການເງິນ; ລາຍງານການເຄື່ອນໄຫວທຸລະກິດ ແລະການສະຫລຸບບັນຊີປະຈຳປີຂອງຕົນໃຫ້ ຄລທ ແລະຂະແໜງການທີ່ກ່ຽວຂ້ອງ;
3. ປະຕິບັດພັນທະພາສີ, ອາກອນ ແລະຄ່າທຳນຽມອື່ນໆ ກ່ຽວກັບການດຳເນີນທຸລະກິດຂອງຕົນຢ່າງຄົບຖ້ວນ ແລະທັນເວລາ;
4. ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນໃນວິສາຫະກິດຂອງຕົນ;
5. ໃຫ້ບູລິມະສິດໃນການນຳໃຊ້ແຮງງານລາວ ພ້ອມກັນນັ້ນກໍໃຫ້ກໍ່ສ້າງ ແລະຍົກລະດັບວິຊາສະເພາະ ລວມທັງຖ່າຍທອດເຕັກໂນໂລຢີ ໃຫ້ແກ່ແຮງງານລາວ;
6. ເອົາໃຈໃສ່ດ້ານສະຫວັດດີການ, ສຸຂະພາບ ແລະຄວາມປອດໄພຂອງຜູ້ອອກແຮງງານໃນວິສາຫະກິດຂອງຕົນ;
7. ປົກປັກຮັກສາສິ່ງແວດລ້ອມ, ຮັບປະກັນບໍ່ໃຫ້ການດຳເນີນທຸລະກິດ ມີຜົນກະທົບອັນຮ້າຍແຮງຕໍ່ສາທາລະນະຊົນ, ຕໍ່ຄວາມປອດໄພຂອງຊາດ ຫລືຕໍ່ຄວາມສະຫງົບຂອງສັງຄົມ;
8. ສ້າງຄັງສະສົມ ຕາມລະບຽບກົດໝາຍ;

9. ໃຫ້ມີການປະກັນໄພ ແລະປະກັນສັງຄົມ ຕາມລະບຽບກົດໝາຍ ກ່ຽວກັບການປະກັນໄພ ແລະປະກັນສັງຄົມ;
10. ກໍລະນີທີ່ມີການຍົກຍ້າຍທີ່ຕັ້ງຂອງວິສາຫະກິດ ຕ້ອງແຈ້ງໃຫ້ຂະແໜງການຄຸ້ມຄອງທີ່ກ່ຽວຂ້ອງຊາບ, ພ້ອມກັນນັ້ນກໍຕ້ອງບູລະນະສະຖານທີ່ ໃຫ້ຢູ່ໃນສະພາບປົກກະຕິ;
11. ລາຍງານການເຄື່ອນໄຫວການຜະລິດ, ການດໍາເນີນທຸລະກິດຂອງຕົນຕໍ່ ຄລທ ແລະຂະແໜງການທີ່ກ່ຽວຂ້ອງ;
12. ປະຕິບັດພັນທະອື່ນໆຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 14. ການເສຍອາກອນລາຍໄດ້ຂອງແຮງງານຕ່າງປະເທດ**

ແຮງງານຕ່າງປະເທດທີ່ເຮັດວຽກໃນວິສາຫະກິດ ລົງທຶນຕ່າງປະເທດ ຕ້ອງເສຍອາກອນລາຍໄດ້ບຸກຄົນໃຫ້ລັດຖະບານລາວໃນອັດຕາ ສິບສ່ວນຮ້ອຍ (10%) ຂອງລາຍໄດ້ທັງໝົດຂອງຕົນ ຍົກເວັ້ນແຮງງານຂອງປະເທດ ທີ່ລັດຖະບານລາວໄດ້ເຊັນສັນຍາ ກ່ຽວກັບການເກັບອາກອນຊໍ້າຊ້ອນນໍາກັນ.

## ໝວດທີ IV
## ນະໂຍບາຍສົ່ງເສີມການລົງທຶນຕ່າງປະເທດ

**ມາດຕາ 15. ນະໂຍບາຍສົ່ງເສີມການລົງທຶນຕ່າງປະເທດ**

ລັດ ພິຈາລະນາໃຫ້ນະໂຍບາຍສົ່ງເສີມການລົງທຶນຕ່າງປະເທດ ໂດຍອີງໃສ່ກິດຈະການຂອງຂະແໜງການ ແລະເຂດ ສົ່ງເສີມການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ແລະ 17 ຂອງກົດໝາຍສະບັບນີ້.

**ມາດຕາ 16. ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ**

ລັດຖະບານກໍານົດກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1. ກິດຈະການ ການຜະລິດສິນຄ້າ ເພື່ອສົ່ງອອກ;
2. ກິດຈະການກະສິກໍາ-ປ່າໄມ້, ປຸງແຕ່ງຜະລິດຕະພັນກະສິກໍາ-ປ່າໄມ້ ແລະ ຫັດຖະກໍາ;
3. ກິດຈະການ ອຸດສາຫະກໍາປຸງແຕ່ງ, ອຸດສາຫະກໍາ ທີ່ນໍາໃຊ້ເຕັກນິກ, ເຕັກໂນໂລຢີທັນສະໄໝ, ກິດຈະການຄົ້ນຄ້ວາວິໄຈວິທະຍາສາດ ແລະການພັດທະນາ, ກິດຈະການປົກປັກຮັກສາສິ່ງແວດລ້ອມ ແລະຊີວະນາໆພັນ;

4. ກິດຈະການກ່ຽວກັບການພັດທະນາທາງດ້ານຊັບພະຍາກອນມະນຸດ, ສີມືແຮງງານ ແລະ ການປົກປັກຮັກສາສຸຂະພາບຂອງພົນລະເມືອງ;
5. ກິດຈະການກໍ່ສ້າງພື້ນຖານໂຄງລ່າງ;
6. ກິດຈະການຜະລິດວັດຖຸດິບ, ອຸປະກອນ ເພື່ອສະໜອງໃຫ້ແກ່ການຜະລິດອຸດສາຫະກໍາທີ່ສໍາຄັນ;
7. ກິດຈະການພັດທະນາອຸດສາຫະກໍາທ່ອງທ່ຽວ ແລະ ການບໍລິການທາງຜ່ານ.

**ມາດຕາ 17. ເຂດທີ່ໄດ້ຮັບການສົ່ງເສີມ**

ລັດຖະບານກໍານົດເຂດສົ່ງເສີມການລົງທຶນຕ່າງປະເທດ ໂດຍອີງໃສ່ທີ່ຕັ້ງທາງດ້ານພູມສາດ, ສະພາບເສດຖະກິດ-ສັງຄົມຂອງເຂດ ຊຶ່ງແບ່ງອອກເປັນ 3 ເຂດຄື:

ເຂດ1: ເຂດພູດອຍ, ພູພຽງ, ທົ່ງພຽງ, ທີ່ບໍ່ມີ ພື້ນຖານໂຄງລ່າງເສດຖະກິດທີ່ເອື້ອອໍານວຍແກ່ການລົງທຶນ.

ເຂດ 2: ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງເສດຖະກິດ ສາມາດຮອງຮັບການລົງທຶນໄດ້ສ່ວນໃດສ່ວນໜຶ່ງແລ້ວ.

ເຂດ 3: ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງຮອງຮັບການລົງທຶນໄດ້ດີແລ້ວ.

ສ່ວນລາຍລະອຽດຂອງການແບ່ງເຂດການສົ່ງເສີມການລົງທຶນນັ້ນ ລັດຖະບານເປັນຜູ້ກໍານົດ.

**ມາດຕາ 18. ນະໂຍບາຍ ດ້ານພາສີ, ອາກອນ**

ວິສາຫະກິດລົງທຶນຕ່າງປະເທດ ທີ່ລົງທຶນຕາມກິດຈະການ ຂອງຂະແໜງການ ແລະເຂດສົ່ງເສີມການລົງທຶນ ທີ່ໄດ້ກໍານົດໄວ້ໃນ ມາດຕາ 16 ແລະ 17 ຂອງກົດໝາຍສະບັບນີ້ຈະໄດ້ຮັບນະໂຍບາຍສົ່ງເສີມ ທາງດ້ານພາສີ, ອາກອນ ດັ່ງນີ້:

ຖ້າລົງທຶນໃນເຂດ 1 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ ເປັນໄລຍະເວລາ 7 ປີ ແລະ ຫລັງຈາກນັ້ນຈະໄດ້ເສຍອາກອນກໍາໄລເຕັມໃນອັດຕາ ສິບສ່ວນຮ້ອຍ (10%).

ຖ້າລົງທຶນໃນເຂດ 2 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ ເປັນໄລຍະເວລາ 5 ປີ, ຫລັງຈາກນັ້ນຈະໄດ້ເສຍອາກອນກໍາໄລໃນອັດຕາຫລຸດຜ່ອນເຄິ່ງໜຶ່ງຂອງ ສິບຫ້າສ່ວນຮ້ອຍ(15% ) ໃນໄລຍະເວລາ 3 ປີ ແລະຫລັງຈາກນັ້ນຈະໄດ້ເສຍອາກອນກໍາໄລເຕັມ ໃນອັດຕາ ສິບຫ້າສ່ວນຮ້ອຍ (15%).

ຖ້າລົງທຶນໃນເຂດ 3 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ ເປັນໄລຍະເວລາ 2 ປີ ຈາກນັ້ນຈະໄດ້ເສຍອາກອນກໍາໄລໃນອັດຕາຫລຸດຜ່ອນເຄິ່ງໜຶ່ງຂອງ ຊາວສ່ວນຮ້ອຍ (20%) ໃນໄລຍະເວລາ 2 ປີ ແລະ ຫລັງຈາກນັ້ນຈະໄດ້ເສຍອາກອນກໍາໄລເຕັມໃນອັດຕາ ຊາວສ່ວນຮ້ອຍ (20%).

ໄລຍະຍົກເວັ້ນອາກອນກຳໄລ ໃຫ້ນັບແຕ່ວັນທີ່ວິສາຫະກິດລົງທຶນຕ່າງປະເທດດຳເນີນທຸລະກິດເປັນຕົ້ນໄປ. ສຳລັບບາງກິດຈະການປູກໄມ້ນັ້ນ ໄລຍະຍົກເວັ້ນອາກອນກຳໄລໃຫ້ນັບແຕ່ວັນທີ່ວິສາຫະກິດມີກຳໄລເປັນຕົ້ນໄປ.

ເມື່ອໝົດໄລຍະການຍົກເວັ້ນອາກອນກຳໄລແລ້ວ ວິສາຫະກິດລົງທຶນຕ່າງປະເທດຕ້ອງເສຍອາກອນກຳໄລຕາມລະບຽບກົດໝາຍ.

ນອກຈາກນະໂຍບາຍສົ່ງເສີມ ທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ ວິສາຫະກິດລົງທຶນຕ່າງປະເທດ ຍັງຈະໄດ້ຮັບນະໂຍບາຍເພີ້ມເຕີມ ດັ່ງລຸ່ມນີ້:

1. ໃນໄລຍະຍົກເວັ້ນ ຫລື ຫລຸດຜ່ອນອາກອນກຳໄລນັ້ນ ຈະໄດ້ຮັບການຍົກເວັ້ນອາກອນຕ່ຳສຸດ;
2. ກຳໄລທີ່ນຳໄປຂະຫຍາຍຕໍ່ໃນກິດຈະການຂອງຕົນ ທີ່ໄດ້ຮັບອະນຸຍາດໄປແລ້ວນັ້ນ ຈະຖືກຍົກເວັ້ນອາກອນກຳໄລໃນປີການບັນຊີ;
3. ໄດ້ຮັບນະໂຍບາຍຍົກເວັ້ນພາສີນຳເຂົ້າ ແລະອາກອນທີ່ເກັບຈາກການນຳເຂົ້າ ຕໍ່ກັບອຸປະກອນ, ເຄື່ອງອາໄຫລ່, ພາຫະນະການຜະລິດໂດຍກົງ, ວັດຖຸດິບທີ່ບໍ່ມີຢູ່ພາຍໃນປະເທດ ຫລື ມີແຕ່ຫາກບໍ່ພຽງພໍ, ຜະລິດຕະພັນເຄິ່ງສຳເລັດຮູບທີ່ນຳເຂົ້າມາ ເພື່ອປຸງແຕ່ງ ຫລື ປະກອບ ເປັນຜະລິດຕະພັນເພື່ອສົ່ງອອກ;
4. ໄດ້ຮັບນະໂຍບາຍຍົກເວັ້ນພາສີຂາອອກ ສຳລັບຜະລິດຕະພັນ ເພື່ອສົ່ງອອກ.

ສ່ວນວັດຖຸດິບ ແລະຜະລິດຕະພັນເຄິ່ງສຳເລັດຮູບທີ່ນຳເຂົ້າ ເພື່ອປຸງແຕ່ງ ຫລືປະກອບເປັນຜະລິດຕະພັນ ເພື່ອທົດແທນສິນຄ້າຂາເຂົ້າ ກໍຈະໄດ້ຮັບການຍົກເວັ້ນ ຫລືຫລຸດຜ່ອນພາສີ, ອາກອນທີ່ເກັບຈາກການນຳເຂົ້າ.

ສຳລັບເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ເຂດການຄ້າຊາຍແດນ ແລະເຂດເສດຖະກິດສະເພາະອື່ນໆນັ້ນ ແມ່ນໃຫ້ປະຕິບັດຕາມລະບຽບ, ກົດໝາຍສະເພາະຂອງແຕ່ລະເຂດ.

## ໝວດທີ V
## ການຂໍອະນຸຍາດລົງທຶນຕ່າງປະເທດ

### ມາດຕາ 19. ການຍື່ນຄຳຮ້ອງຂໍລົງທຶນ

ການຂໍອະນຸຍາດລົງທຶນຕ່າງປະເທດ ຢູ່ ສປປ ລາວ ຕ້ອງຜ່ານປະຕູດຽວ ຊຶ່ງແມ່ນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ທີ່ມີຊື່ຫຍໍ້ວ່າ: “ ຄລທ ”.

ຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງຢາກລົງທຶນ ຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງຕໍ່ ຄລທ ຂັ້ນສູນກາງ ຫລືຂັ້ນແຂວງ ແລ້ວແຕ່ລະກໍລະນີ ພ້ອມດ້ວຍເອກະສານປະກອບຄື: ສຳເນົາໜັງສືຜ່ານ

ແດນ, ຊີວະປະວັດ, ບົດວິພາກເສດຖະກິດ-ເຕັກນິກ ຫລືແຜນການດໍາເນີນທຸລະກິດ, ຂໍ້ມູນກ່ຽວກັບທຸລະກິດ ຖ້າຫາກແມ່ນນິຕິບຸກຄົນ, ສັນຍາຮ່ວມທຶນ ຖ້າຈະລົງທຶນໃນຮູບການວິສາຫະກິດປະສົມ.

**ມາດຕາ 20. ການພິຈາລະນາຄໍາຮ້ອງຂໍລົງທຶນ**

ພາຍຫຼັງໄດ້ຮັບຄໍາຮ້ອງ ພ້ອມດ້ວຍເອກະສານປະກອບຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 19 ຂອງກົດໝາຍສະບັບນີ້ແລ້ວ ຄລທ ຕ້ອງປະສານສົມທົບກັບຂະແໜງການ ແລະທ້ອງຖິ່ນທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າມີຄວາມຈໍາເປັນ ເພື່ອພິຈາລະນາ ແລະໃຫ້ຄໍາຕອບເປັນລາຍລັກອັກສອນແກ່ຜູ້ລົງທຶນຕ່າງປະເທດ ຕາມກໍານົດເວລາດັ່ງຕໍ່ໄປນີ້:

- ໂຄງການທີ່ຢູ່ໃນບັນຊີສົ່ງເສີມ ສິບຫ້າ ວັນລັດຖະການ;
- ໂຄງການທີ່ຢູ່ໃນບັນຊີເປີດມີເງື່ອນໄຂ ຊາວຫ້າ ວັນລັດຖະການ;
- ໂຄງການທີ່ພົວພັນກັບການໃຫ້ສິດສໍາປະທານ ສີ່ສິບຫ້າ ວັນລັດຖະການ.

ຜູ້ລົງທຶນຕ່າງປະເທດທີ່ມີເງື່ອນໄຂຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ຈະໄດ້ຮັບໃບອະນຸຍາດລົງທຶນ, ທະບຽນວິສາຫະກິດ ແລະທະບຽນອາກອນພ້ອມກັນຢູ່ ຄລທ ບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນ; ຈາກນັ້ນຈຶ່ງຖືວ່າເປັນວິສາຫະກິດທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປລາວ.

ພາຍໃນ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດລົງທຶນເປັນຕົ້ນໄປ ວິສາຫະກິດລົງທຶນຕ່າງປະເທດ ຕ້ອງເລີ່ມຈັດຕັ້ງປະຕິບັດກິດຈະການລົງທຶນຂອງຕົນ ຕາມຂັ້ນຕອນຂອງບົດວິພາກເສດຖະກິດ-ເຕັກນິກທີ່ໄດ້ກໍານົດໄວ້ໃນໃບອະນຸຍາດລົງທຶນ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປລາວ, ຖ້າບໍ່ປະຕິບັດຕາມກໍານົດເວລາດັ່ງກ່າວ ໃບອະນຸຍາດລົງທຶນຈະຖືກພິຈາລະນາຍົກເລີກ.

## ໝວດທີ VI
## ການຄຸ້ມຄອງການລົງທຶນຕ່າງປະເທດ

**ມາດຕາ 21. ອົງການຄຸ້ມຄອງການລົງທຶນຕ່າງປະເທດ**

ອົງການຄຸ້ມຄອງການລົງທຶນຕ່າງປະເທດ ມີດັ່ງນີ້:

1. ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະຂັ້ນແຂວງ;
2. ຂະແໜງການ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 22. ສິດ ແລະໜ້າທີ່ ຂອງ ຄລທ ຂັ້ນສູນກາງ**

ຄະນະກໍາມະການສົ່ງເສີມ ແລະຄຸ້ມຄອງການລົງທຶນຂັ້ນສູນກາງ ຊຶ່ງແມ່ນນາຍົກລັດຖະມົນຕີເປັນຜູ້ແຕ່ງຕັ້ງ, ມີສໍານັກງານຕັ້ງຢູ່ຄະນະກໍາມະການແຜນການ ແລະການລົງທຶນ, ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາຍຸດທະສາດ, ນະໂຍບາຍການສົ່ງເສີມ ແລະດຶງດູດການລົງທຶນຕ່າງປະເທດ ເພື່ອສະເໜີໃຫ້ລັດຖະບານພິຈາລະນາຕົກລົງ;
2. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະແຈ້ງການ ກ່ຽວກັບການປົກປ້ອງ ແລະສົ່ງເສີມການລົງທຶນຕ່າງປະເທດ;
3. ສ້າງແຜນການ ແລະສັງລວມບັນຊີໂຄງການລົງທຶນ ທີ່ຕ້ອງການດຶງດູດການລົງທຶນຕ່າງປະເທດ;
4. ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ສະໜອງຂໍ້ມູນຂ່າວສານ, ອໍານວຍຄວາມສະດວກໃຫ້ຜູ້ລົງທຶນຕ່າງປະເທດ;
5. ພິຈາລະນາອອກ ຫລືຖອນໃບອະນຸຍາດການລົງທຶນຕ່າງປະເທດ ໃນຂອບເຂດສິດ ແລະໜ້າທີ່ຂອງຕົນ ເປັນຕົ້ນແມ່ນໂຄງການທີ່ພົວພັນເຖິງການໃຫ້ສິດສໍາປະທານ;
6. ຊີ້ນໍາ ແລະປະສານສົມທົບກັບຂະແໜງການ ແລະທ້ອງຖິ່ນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ;
7. ຕິດຕາມກວດກາ, ປະເມີນຜົນ ແລະລາຍງານໃຫ້ລັດຖະບານ ກ່ຽວກັບການດໍາເນີນທຸລະກິດ ຂອງວິສາຫະກິດລົງທຶນຕ່າງປະເທດ;
8. ເປັນໃຈກາງປະສານງານໃນການຊຸກຍູ້, ສົ່ງເສີມ ແລະແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນການດໍາເນີນທຸລະກິດຂອງວິສາຫະກິດລົງທຶນຕ່າງປະເທດ;
9. ຈັດກອງປະຊຸມປະຈໍາປີ ຂອງ ຄລທ ແລະກອງປະຊຸມປຶກສາຫາລື ກັບຜູ້ລົງທຶນຕ່າງປະເທດ;
10. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 23. ສິດ ແລະໜ້າທີ່ຂອງ ຄລທ ຂັ້ນແຂວງ**

ຄະນະກໍາມະການ ສົ່ງເສີມ ແລະຄຸ້ມຄອງ ການລົງທຶນຕ່າງປະເທດ ຂັ້ນແຂວງ ຊຶ່ງແມ່ນປະທານ ຄລທ ຂັ້ນສູນກາງເປັນຜູ້ແຕ່ງຕັ້ງ ເປັນເສນາທິການໃຫ້ແກ່ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ, ຫົວໜ້າເຂດພິເສດ ແລະ ຄລທ ຂັ້ນສູນກາງໃນການສົ່ງເສີມ ແລະຄຸ້ມຄອງການລົງທຶນຕ່າງປະເທດ, ມີສໍານັກງານຕັ້ງຢູ່ພະແນກແຜນການ ແລະການລົງທຶນ, ມີສິດ ແລະໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນຍຸດທະສາດ, ນະໂຍບາຍການສົ່ງເສີມ ແລະດຶງດູດການລົງທຶນຕ່າງປະເທດ ຢູ່ທອ້ງຖິ່ນຂອງຕົນ;
2. ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ສະໜອງຂໍ້ມູນຂ່າວສານ, ອໍານວຍຄວາມສະດວກໃຫ້ຜູ້ລົງທຶນຕ່າງປະເທດ;
3. ພິຈາລະນາອອກ ຫລືຖອນໃບອະນຸຍາດລົງທຶນ ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

4. ປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມຕ່າງໆ ໃນໂຄງການທີ່ຕົນໄດ້ອະນຸມັດ ແລະໃນການຈັດຕັ້ງປະຕິບັດຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະແຈ້ງການ ຂອງຂັ້ນເທິງ;
5. ຕິດຕາມກວດກາ, ປະເມີນຜົນ ແລະລາຍງານ ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ຫລືຫົວໜ້າເຂດພິເສດ ແລະ ຄລທ ຂັ້ນສູນກາງ ກ່ຽວກັບການລົງທຶນຕ່າງປະເທດ;
6. ເປັນໃຈກາງປະສານງານ ໃນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ກ່ຽວກັບການລົງທຶນຕ່າງປະເທດ;
7. ຈັດກອງປະຊຸມປະຈໍາປີຂອງ ຄລທ ຂັ້ນແຂວງ ແລະກອງປະຊຸມປຶກສາຫາລືກັບຜູ້ລົງທຶນຕ່າງປະເທດ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 24. ສິດ ແລະ ໜ້າທີ່ຂອງ ຂະແໜງການ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງຕ້ອງດໍາເນີນການສົ່ງເສີມ, ຄຸ້ມຄອງການລົງທຶນຕ່າງປະເທດ ຕາມສິດ ແລະໜ້າທີ່ຂອງຕົນ ດັ່ງຕໍ່ໄປນີ້:

1. ປະສານສົມທົບກັບ ຄລທ ຂັ້ນສູນກາງໃນການສ້າງລະບຽບກົດໝາຍ, ນະໂຍບາຍ ແລະແຜນການກ່ຽວກັບການລົງທຶນຕ່າງປະເທດ;
2. ສ້າງແຜນການ ແລະບັນຊີໂຄງການລົງທຶນ ທີ່ຕ້ອງການດຶງດູດການລົງທຶນ ຂອງຕ່າງປະເທດໃນຂະແໜງການຂອງຕົນ, ຈັດຕັ້ງການໂຄສະນາ, ຂົນຂວາຍ ແລະສົ່ງເສີມການລົງທຶນ;
3. ເຂົ້າຮ່ວມພິຈາລະນາຕົກລົງໂຄງການການລົງທຶນ;
4. ຊີ້ນໍາຂະແໜງການຂອງຕົນທັງຢູ່ສູນກາງ ແລະທ້ອງຖິ່ນໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ແລະແກ້ໄຂຂັ້ນຕອນຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນ;
5. ກວດກາ,ກວດການ ແລະປະເມີນຜົນກິດຈະການຂອງວິສາຫະກິດລົງທຶນຕ່າງປະເທດ ແລະຄູ່ດໍາເນີນທຸລະກິດຕາມສັນຍາໃນຂອບເຂດສິດ, ໜ້າທີ່ຂອງຕົນ ແລະລາຍງານໃຫ້ຂັ້ນເທິງຂອງຕົນ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

ສໍາລັບອົງການປົກຄອງ ແລະຂະແໜງການຂັ້ນທ້ອງຖິ່ນທີ່ກ່າວມາເທິງນີ້ ກໍໃຫ້ປະສານສົມທົບກັບ ຄລທ ຂັ້ນທ້ອງຖິ່ນ ຕາມສິດແລະໜ້າທີ່ ທີ່ໄດ້ກໍານົດໄວ້ໃນມາດຕານີ້.

## ໝວດທີ VII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 25. ຫລັກການລວມ**

ໃນການດຳເນີນທຸລະກິດ, ຖ້າຫາກມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີຕ້ອງໄດ້ ປະຕິບັດຫລັກການແກ້ໄຂດ້ວຍການປະນີປະນອມນຳກັນ, ໄກ່ເກ່ຍ ຫລື ຮ້ອງຟ້ອງ.

**ມາດຕາ 26. ການໄກ່ເກ່ຍຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນທຸລະກິດ ຊຶ່ງຄູ່ກໍລະນີບໍ່ສາມາດແກ້ໄຂໄດ້ດ້ວຍຮູບການປານີປານອມນຳກັນນັ້ນ ໃຫ້ສະເໜີຕໍ່ ຄລທ ບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນເປັນຜູ້ໄກ່ເກ່ຍ.

ໃນກໍລະນີທີ່ ຄລທ ບໍ່ສາມາດໄກ່ເກ່ຍໄດ້ນັ້ນ ກໍໃຫ້ສະເໜີຕໍ່ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ.

**ມາດຕາ 27. ການຮ້ອງຟ້ອງ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນທຸລະກິດ ຊຶ່ງບໍ່ສາມາດຕົກລົງກັນໄດ້ດ້ວຍການໄກ່ເກ່ຍ, ຄູ່ກໍລະນີ ກໍສາມາດຮ້ອງຟ້ອງໄປຍັງຄະນະກຳມະການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫລື ສານປະຊາຊົນ ເພື່ອພິຈາລະນາແກ້ໄຂ ຕາມຂະບວນການຍຸຕິທຳ.

## ໝວດທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28.** ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງ ຫາກມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ແລະ ໄດ້ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງຊາດຈະໄດ້ຮັບການຍ້ອງຍໍຊົມເຊີຍ ຕາມຄວາມເໝາະສົມ.

**ມາດຕາ 29. ມາດຕະການຕໍ່ຜູ້ລົງທຶນທີ່ລະເມີດ**

ບຸກຄົນ ຫລື ນິຕິບຸກຄົນ ຫາກລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການແລ້ວແຕ່ກໍລະນີເບົາ ຫລື ໜັກ ດ້ວຍການກ່າວເຕືອນ, ໂຈະ, ຖອນໃບອະນຸຍາດລົງທຶນທີ່ໄດ້ຮັບໄປແລ້ວນັ້ນ ຫລື ມອບໃຫ້ສານພິຈາລະນາ.

**ມາດຕາ 30. ມາດຕະການຕໍ່ບຸກຄົນອື່ນທີ່ລະເມີດ**

ບຸກຄົນ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການລົງທຶນ ເຊັ່ນ: ສວຍໃຊ້ຖານະຕຳແໜ່ງເພື່ອກົດໜ່ວງ ຫລື ຂັດຂວາງການສົ່ງເສີມ, ການອະນຸຍາດລົງທຶນ, ປອມແປງເອກະສານ, ຕົວະຍົວະຫລອກລວງ ຜູ້ລົງທຶນ, ຮັບສິນບົນ ຫລື ດ້ວຍການກະທຳອື່ນໆ ທີ່ສ້າງຄວາມເສຍຫາຍໃຫ້ແກ່ລັດ ຫລື ຜູ້ລົງທຶນຈະໄດ້ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ, ຈະຖືກປະຕິບັດວິໄນ ຫລື ມາດຕະການອື່ນໆຕາມກົດໝາຍຂອງ ສປປ ລາວ.

## ໝວດທີ VIII

## ບົດບັນຍັດສຸດທ້າຍ

**ມາດຕາ 31. ການຈັດຕັ້ງປະຕິບັດກົດໝາຍ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 32. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ ຫົກສິບ ວັນ ນັບແຕ່ວັນ ທີ່ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ. ຫລັງຈາກນັ້ນກົດໝາຍວ່າດ້ວຍການສົ່ງເສີມ ແລະຄຸ້ມຄອງການລົງທຶນຂອງຕ່າງປະເທດ ສະບັບເລກທີ 01/94/ສພຊ, ລົງວັນທີ 14 ມີນາ 1994 ຈະໝົດຜົນນຳໃຊ້ ໂດຍບໍ່ແຕະຕ້ອງເຖິງບັນດາສິດ, ຜົນປະໂຫຍດ ແລະພັນທະ ຊຶ່ງຜູ້ລົງທຶນຕ່າງປະເທດໄດ້ຮັບ ຫລືຕ້ອງປະຕິບັດຕາມພາຍໃຕ້ກົດໝາຍສະບັບເລກທີ 01/94/ສພຊດັ່ງກ່າວນັ້ນ. ຖ້າວ່າຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບອະນຸຍາດລົງທຶນພາຍໃຕ້ກົດໝາຍສະບັບ 01/94/ສພຊ ນັ້ນ ຫາກມີຈຸດປະສົງຢາກຂໍຮັບສິດປະຕິບັດຕາມກົດໝາຍສະບັບນີ້ ຜູ້ກ່ຽວຕ້ອງສົ່ງຄຳສະເໜີຂອງຕົນຢ່າງເປັນລາຍລັກອັກສອນ ພາຍໃນກຳນົດ ຮ້ອຍຊາວວັນ ນັບແຕ່ວັນກົດໝາຍສະບັບນີ້ມີຜົນສັກສິດເປັນຕົ້ນໄປ ຕໍ່ຄະນະກຳມະການຄຸ້ມຄອງການລົງທຶນຕ່າງປະເທດເພື່ອພິຈາລະນາຕົກລົງ.

ປະທານສະພາແຫ່ງຊາດ